ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117
PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 156 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 13 DEC 2022

ຮຽນ : ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ
ເລື່ອງ : ເຊີນເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022

- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 19/11/2022.
- ອີງຕາມບັນຊີທະບຽນຜູ້ຖືຮຸ້ນຈາກສຳນັກງານຕະຫຼາດຫຼັກຊັບລາວ.

ບໍລິສັດ ຊີມັງລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ບຊລ ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 16/01/2023 ເວລາ 14:00 ໂມງ,ເລີ່ມລົງທະບຽນເວລາ 13:00 -13:30 ໂມງ, ທີ່ຫ້ອງປະຊຸມໃຫ່ຍຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສປປລາວ ເພື່ອພິຈາລະນາ ແລະຮັບຮອງເອົາມະຕິຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດ ບຊລ ໄດ້ແຈ້ງໃຫ້ຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ 6/12/2022 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ສະນັ້ນ, ບໍລິສັດ ບຊລ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນ ຈາກບໍລິສັດ ຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ ຈະຕ້ອງໄດ້ເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານ ເຂົ້າໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ພ້ອມເອກະສານຄັດຕິດຕ່າງໆຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະບຽນເຂົ້າຮ່ວມກອງປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ຜູ້ອຳນວຍການ ບໍລິສັດ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລີ

扫描全能王 创建

ກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2022

ຂອງ ບໍລິສັດ ຊີມັ້ງລາວ ມະຫາຊົນ

ເອກະສານຄັດຕິດ :

1. ວາລະກອງປະຊຸມຜູ້ຖືຮຸ້ນ ບຊລ ປີ 2022.
2. ເຫັນດີປ່ຽນແປງຂາຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ
3. ເຫັນດີປ່ຽນແປງຜູ້ຕາງໜ້າທີ່ຖືກກົດໝາຍ (ຜູ້ອຳນວຍການໃຫ່ຍ)
4. ເຫັນດີສືບຕໍ່ຈັດຕັ້ງປະຕິບັດຕາມແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ
5. ແບບຟອມໃບມອບສິດ.
6. ແຜນທີ່ຕັ້ງຂອງກອງປະຊຸມວິສາມັນຜູ້ຖືຮຸ້ນປີ 2022

ໝາຍເຫດ :

1. ຜູ້ຖືຮຸ້ນທຸກໆທ່ານຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆເລີ່ມແຕ່ວັນທີ 13/12/2022 ຢູ່ຕະຫຼາດຫຼັກຊັບ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ ບ້ານໂພນທັນ ເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ ໂທລະສັບ (856-21) 454361, ແຟັກ (856-21) 454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດວ້ຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະໜັໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະຕາມ <u>ເອກະສານຄັດຕິດ 5</u> ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖວ້ນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມກອງປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະໜັໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນນີ້ ແລະສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້,
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະ ແລະໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການ ຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບສົ່ງເຖິງ ບໍລິສັດ ຊີມັງລາວ ມະຫາຊົນ ຊັ້ນ 1, ພະແນກເລຂານຸການ ບໍລິສັດ, ບ້ານ ໂພນພະເນົາ, ຮ່ອມ 3 ເມືອງໄຊເສດຖາ ນະຄອນຫລວງວຽງຈັນ ສປປລາວ, ຕູ້ ປ.ນ 6821 ແລະກະລຸນາສົ່ງເຖິງບໍລິສັດ ກ່ອນວັນທີ 16/1/2023
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ກະລຸນາສອບຖາມ ທ່ານ ນາງ ຄຳມີ (856-20) 55966610 ແລະ ທ່ານ ນາງ ຫົງ (856-20) 96031812 ໃນໄມງລັດຖະການ.

ກະຊວງ ... ບໍລິສັດ ... ຊີມັງລາວ ... Lao Cement ... Compan ... ມະຫາຊົນ ... ຫຼວງ

扫描全能王 创建

ຄຳແນະນຳກ່ຽວກັບການລົງຄະແນນສຽງ

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ບໍລິສັດ ຊີມັງລາວ ມະຫາຊົນຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ
2. ກອງປະຊຸມ ຈະຊົມພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
3. ໃນການລົງຄະແນນສຽງຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນ ຕ້ອງລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະຮວບລວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ທັງໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 143 ຂອງກົດໝາຍວ່າດ້ວຍວິສາຫະກິດ.

扫描全能王 创建

ເອກະສານຄັດຕິດ: 01

ວາລະຂອງກອງປະຊຸມ
ສາມັນຜູ້ຖືຮຸ້ນ ບຊລ ປະຈຳປີ 2022

- ວາລະທີ 01: ພິຈາລະນາ ແລະຮັບຮອງປ່ຽນແປງຂາຮຸ້ນຂອງບໍລິສັດ ຊີມັ້ງລາວ ມະຫາຊົນ

ລາຍລະອຽດ :

ລາຍງານຜົນການປ່ຽນແປງຂາຮຸ້ນຂອງບໍລິສັດ ຊີມັ້ງລາວ ມະຫາຊົນ ທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 19/11/2022 ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 02.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບ ຮອງ ເອົາ ຜົນການປ່ຽນແປງຂາຮຸ້ນຂອງບໍລິສັດ ຊີມັ້ງລາວ ມະຫາຊົນ.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

- ວາລະທີ 02 : ພິຈາລະນາ ແລະຮັບຮອງປ່ຽນແປງຜູ້ຕາງໜ້າທີ່ຖືກກົດໝາຍ (ຜູ້ອຳນວຍການໃຫ່ຍ)

ລາຍລະອຽດ :

ລາຍງານຜົນປ່ຽນແປງຜູ້ຕາງໜ້າທີ່ຖືກກົດໝາຍ (ຜູ້ອຳນວຍການໃຫ່ຍ) ປະຈຳປີ 2022 ທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 19/11/2022 ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 03.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ ເອົາ ຜົນປ່ຽນແປງຜູ້ຕາງໜ້າທີ່ຖືກກົດໝາຍ (ຜູ້ອຳນວຍການໃຫ່ຍ) ປະຈຳປີ 2022

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03: ພິຈາລະນາ ແລະຮັບຮອງສືບຕໍ່ຈັດຕັ້ງປະຕິບັດຕາມແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ

ລາຍງານຜົນການສືບຕໍ່ຈັດຕັ້ງປະຕິບັດຕາມແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ ທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 19/11/2022 ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 04.

扫描全能王 创建

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ຜົນການສືບຕໍ່ຈັດຕັ້ງປະຕິບັດຕາມແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

扫描全能王 创建

ເອກະສານຄັດຕິດ :02

ບົດລາຍງານ

ວ່າດ້ວຍການປ່ຽນແປງຂາຮຸ້ນໃໝ່ຂອງບໍລິສັດ ຊີມັງລາວ ມະຫາຊົນ

- ອີງໃສ່ແຜນປັບປຸງຟື້ນຟືນທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ
- ອີງໃສ່ການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານ ຂອງບໍລິສັດ ຄັ້ງວັນທີ 19 ພະຈິກ 2022.
- ອີງຕາມໜັງສືແຈ້ງຕອບຂອງບໍລິສັດ ຕະຫຼາດຫຼັກຊັບລາວ ສະບັບເລກທີ 1632/ຕລຊລ ລົງວັນທີ 29 ພະຈິກ 2022.

ບໍລິສັດ ຊີມັງລາວ ມະຫາຊົນ (ໂຮງງານ ຊີມັງວັງວຽງ ຫຼັງ 2) ຂໍຖືເປັນກຽດຮຽນສະ ເໜີມາ ຍັງທ່ານຊາບວ່າ : ທາງບໍລິສັດ ຊີມັງລາວ ມະຫາຊົນ ໄດ້ສຳເລັດການໂອນຮຸ້ນຜູ້ສ້າງຕັ້ງຂອງບໍລິສັດ ຊີມັງ ລາວ ມະຫາຊົນ ແລ້ວ ໃນວັນທີ 28 ພະຈິກ 2022 ໂດຍໄດ້ດຳເນີນການໂອນຮຸ້ນຂອງບໍລິສັດການຮ່ວມ ມືເຕັກນິກເສດຖະກິດສາກົນຢຸນນານ ສປຈີນ ຈຳກັດ (ຕາງໜ້າໂດຍທ່ານ Liu Wei) ໃຫ້ ບໍລິສັດ ເຄືອ ຂ່າຍເຕັກໂນໂລຊີຊຽ່ນຫານຢຸນນານ ຈຳກັດ (ຕາງໜ້າໂດຍທ່ານ Nie Lei), ລວມຈຳນວນ 14,280,000 ຮຸ້ນ (ເທົ່າກັບ 35,6964%).

ດັ່ງນັ້ນ, ຈຶ່ງສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນພິຈາລະນາ ແລະຮັບຮອງ.

ນະຄອນຫຼວງວຽງຈັນ, ວັນທີ 13 DEC 2022

ບໍລິສັດ ຊີມັງລາວ ມະຫາຊົນ
Lao Cement Public Company

扫描全能王 创建

ເອກະສານຄັດຕິດ :03

ບົດລາຍງານ

ວ່າດ້ວຍການປ່ຽນຜູ້ຕ່າງໜ້າຖືກົດໝາຍ (ຜູ້ອຳນວຍການໃຫ່ຍ)

- ອີງໃສ່ລະບຽບການທີ່ກ່ຽວຂ້ອງ.
- ອີງໃສ່ການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານ ຂອງບໍລິສັດ ຄັ້ງວັນທີ 19 ພະຈິກ 2022.

ຜ່ານການປຶກສາຫາລືຂອງ ກອງປະຊຸມສະພາບໍລິຫານຂອງບໍລິສັດ ຄັ້ງວັນທີ 19 ພະຈິກ 2022 ເນື່ອງຈາກວ່າໄດ້ສຳເລັດການໂອນຮຸ້ນ ຂອງບໍລິສັດ ຊີມັງລາວ ມະຫາຊົນ ສະນັ້ນ ທ່ານ ຈ່າງລີ ຜູ້ອຳນວຍການ ຈະໄດ້ຍົກຍ້າຍໄປປະຈຳຢູ່ ບໍລິສັດ ຢຸນນານສາກົນ, ດັ່ງນັ້ນ, ຈຶ່ງສະເໜີພິຈາລະນາແຕ່ງຕັ້ງ ທ່ານ ເນັຍເຫຼຍຂຶ້ນດຳລົງຕຳແໜ່ງເປັນ ຜູ້ອຳນວຍການໃໝ່ ຂອງບໍລິສັດ ຊີມັງລາວມະຫາຊົນ ແທນທ່ານ ຈ່າງລີ ຜູ້ເກົ່າ.

ດັ່ງນັ້ນ, ຈຶ່ງສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນພິຈາລະນາ ແລະຮັບຮອງ.

ນະຄອນຫຼວງວຽງຈັນ, ວັນທີ 13 DEC 2022

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຜູ້ລາຍງານ

扫描全能王 创建

ຊີວະປະຫວັດ

简历



ຊື່ ແລະ ນາມສະກຸນ: ທ່ານ ເນ້ຍເຫຼີຍ

姓名： 聂磊

ອາຍຸ: 51 ປີ

年龄：51岁

ໂຮງຮຽນຈົບ: ມະຫາວິທະຍາໄລ ອຸດສາຫະກຳພາກຕາເວັນຕົກສຽງເໜືອ

毕业院校：西北工业大学

ສະມາຄົມທີ່ໄດ້ເຂົ້າຮ່ວມ 加入协会：

ນັກບັນຊີຜູ້ບໍລິຫານງານ ຂອງ ສະມາຄົມນັກບັນຊີ ແລະ ນັກກວດສອບລາວ

老挝会计师与审计师协会 执行会计师（LCPA）

ສະມາຊິກ ຂອງ ສະມາຄົມນັກຂຽນ ເຊ້ຍເໝິນຈີນ

中国厦门作家协会 会员

ສະຖານະພາບການດຳລົງຕຳແໜ່ງ 任职情况：

ປະທານສະພາບໍລິຫານ ບໍລິສັດ ເຄືອຂ່າຍເຕັກໂນໂລຊີ ຊຽນຫານຢຸນນານ ຈຳກັດ

云南千涵网络科技有限责任公司 董事长

ຄູ່ຮ່ວມງານ ຂອງ ບໍລິສັດນັກບັນຊີ ຈ່ອງເສີງລຸ້ຍຊິ້ນລາວ

老挝中诚睿信会计师事务所 高级合伙人

ກຳມະການບໍລິຫານງານ ຂອງ ບໍລິສັດ ປະເມີນລາຄາ ຈ່ອງເຈິ້ງລາວ ຈຳກັດ

老挝中证评估有限公司 执行董事

ກຳມະການບໍລິຫານງານ ຂອງ ບໍລິສັດ ວັດທະນະທຳສື່ມວນຊົນ ສີຢານປັກກິ່ງ ຈຳກັດ

北京希言文化传媒有限公司 执行董事

ກຳມະການບໍລິຫານງານ ຂອງ ບໍລິສັດ ຮຸ້ຍກີເສີງລຸ້ຍ ເຊ້ຍເໝິນ ຈຳກັດ

厦门慧格诚睿有限公司 执行董事

扫描全能王 创建

ຊີວະປະຫວັດ

简历



ຊື່ ແລະ ນາມສະກຸນ: ท่าน จ่างลี้

姓名： 张立

ອາຍຸ: 49 ປີ

年龄：49 岁

ໂຮງຮຽນຈົບ: ມະຫາວິທະຍາໄລ ການເງິນ ແລະ ເສດຖະກິດຢຸນນານ

毕业院校：云南财经大学

ປະສົບການເຮັດວຽກ 任职情况：

- 07/1996 – 09/1998 ບໍລິສັດຢຸນນານສາກົນ ພະແນກການເງິນ ຜູ້ຊ່ວຍບັນຊີ

1996 年 7 月～1998 年 9 月 云南国际公司财务部 助理会计师

- 10/1998 – 03/2000 ບໍລິສັດຢຸນນານສາກົນ ຫົວໜ້າພະແນກການເງິນປະຈຳຢູ່ໂຄງການກະສິກຳທີ່ ສະຫະພັນລັດໄມໂຄຣນີເຊຍ

1998 年 10 月～2000 年 3 月 云南国际公司 驻密克罗尼西亚联邦农业项目财务主管

- 04/2000 – 03/2002 ບໍລິສັດຢຸນນານສາກົນ ຫົວໜ້າພະແນກການເງິນປະຈຳໂຄງການສູນວັດທະນະທຳ ຈີນທີ່ປະເທດໄທ

2000 年 4 月～2002 年 3 月 云南国际公司 驻泰国语言文化中心项目财务主管

- 04/2002 – 07/2007 ບໍລິສັດຢຸນນານສາກົນ ຮອງຫົວໜ້າພະແນກການເງິນ

2002 年 4 月～2007 年 7 月 云南国际公司财务部副经理

- 08/2007 – 05/2009 ບໍລິສັດຢຸນນານສາກົນ ຮອງຫົວໜ້າຫ້ອງການ, ຫົວໜ້າຫ້ອງການ

2007 年 8 月～2009 年 5 月 云南国际公司 办公室副主任、主任

- 06/2009 – 06/2015 ບໍລິສັດຢຸນນານສາກົນ ຜູ້ຊ່ວຍວຽກຜູ້ອຳນວຍການໃຫຍ່

2009 年 6 月～2015 年 6 月 云南国际公司总经理助理

- 06/2015 – ປັດຈຸບັນນີ້ ບໍລິສັດຢຸນນານສາກົນ ຜູ້ຊ່ວຍວຽກຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຊີມັງລາວ ມະຫາຊົນ

2015 年 6 月至今，云南国际公司总经理助理、老挝水泥公司总经理

扫描全能王 创建

ຊີວະປະຫວັດ

简历



ຊື່ ແລະ ນາມສະກຸນ: ທ່ານ ຫຼີ ຊຸນໂປ

姓名：李春波

ອາຍຸ: 46 ປີ

年龄：46 岁

ໂຮງຮຽນຈົບ: ມະຫາວິທະຍາໄລ ການເງິນ ແລະ ເສດຖະກິດຢຸນນານ

毕业院校：云南财经大学

ປະສົບການເຮັດວຽກ 任职情况：

- 07/1998 – 06/1999 ບໍລິສັດຢຸນນານສາກົນ ພະແນກການເງິນ ຜູ້ຊ່ວຍບັນຊີ

1998 年 7 月-1999 年 6 月云南国际公司财务部 助理会计师

- 06/1999 – 04/2001 ບໍລິສັດຢຸນນານສາກົນ ພະແນກການເງິນປະຈຳມົຣິຕິສ ນັກບັນຊີ

1999 年 6 月-2001 年 4 月云南国际驻毛里求斯经理部 主办会计

- 04/2001 – 02/2013 ບໍລິສັດຢຸນນານສາກົນ ພະແນກການເງິນ ນັກບັນຊີ, ຮອງຫົວໜ້າຫ້ອງການ

2001 年 4 月-2013 年 2 月云南国际公司财务部 会计师、副主任

- 02/2013 – 02/2016 ບໍລິສັດ ຊີມັ່ງລາວ ມະຫາຊົນ ຫົວໜ້າພະແນກການເງິນ

2013 年 2 月至 2016 年 6 月老挝水泥有限公司财务部经理

- 02/2016 – ປັດຈຸບັນນີ້ ບໍລິສັດຢຸນນານສາກົນ ພະແນກການເງິນ ຮອງຫົວໜ້າຫ້ອງການ, ຫົວໜ້າຫ້ອງການ

2016 年 6 月至今 云南国际财务部 副主任、主任

扫描全能王 创建

ຊີວະປະຫວັດ

简历

ຊື່ ແລະ ນາມສະກຸນ: ທ່ານ ສ່ຽວ ເຈ

姓名：肖杰



ອາຍຸ: 52 ປີ

年龄：52 岁

ໂຮງຮຽນຈົບ: Party School of the Central Committee of CPC

毕业院校：中央党校

ປະສົບການເຮັດວຽກ 任职情况：

- 08/1990 - 01/1992 ບໍລິສັດພະລັງງານປຸງໃໝ່ຄຸນມິງ ນັກບັນຊີ

1990.08 - 1992.01 昆明市再生资源公司会计

- 02/1992 - 10/2004 ບໍລິສັດ ອຸປະກອນໂລຫະ ແລະ ບໍ່ແຮ່ ຫົວໜ້າຫ້ອງການ

1992.02 - 2004.10 云南矿山冶金设备成套公司办公室主任

- 10/2004 - 12/2007 ບໍລິສັດ ການກໍ່ສ້າງຕົບແຕ່ງ ເຊີນມ້າອຸນນານ ຈຳກັດ ຮອງຜູ້ອຳນວຍການ

2004.10 - 2007.12 云南正茂建筑装饰工程有限公司副总

- 12/2007 - 01/2014 ບໍລິສັດ ໂລຫະສີທອງແດງຢຸນນານ ຊິນຢວນກວາງຕຸ້ງ ຈຳກັດ ຫົວໜ້າຫ້ອງການ

2007.12 - 2014.01 广东清远云铜有色金属有限公司办公室主任

- 02/2014 - 04/2014 ບໍລິສັດ ເຕັກນິກທອງແດງຢຸນນານ ສວນຟັກໄຂ່ ຫົວໜ້າຫ້ອງການ

2014.02 - 2014.4 云铜科技股份有限公司孵化园公司办公室主任

- 05/2014 - ປັດຈຸບັນນີ້ ບໍລິສັດຢຸນນານສາກົນ ຫົວໜ້າຫ້ອງການ

2014.05 - 今 中国云南国际经济技术合作有限公司办公室主任

扫描全能王 创建

ຊີວະປະຫວັດ



ຊື່ ແລະນາມສະກຸນ: ທ່ານ ວົງວິຈິດ ແກ້ວວົງກິດ

ອາຍຸ: 52 ປີ ສັນຊາດ: ລາວ

<u>ລະດັບການສຶກສາ:</u>

ການບັນຊີຊັ້ນສູງ,ໂຮງຮຽນ:ເຕັກນິກປາກປ່າສັກ (ສຶກປີ 1994)

- ປີ 1995-2020ເຂົ້າເປັນພະນັກງານໂຮງງານຊີມັງລາວ ວັງວຽງ 1 ,ຮັບຜິດຊອບ ຮອງພະແນກການ-ບັນຊີ.
- ປີ 2021 ໄດ້ຍ້າຍມາຮັບຜິດຊອບຢູ່ໂຮງງານຊີມັງລາວ ວັງວຽງຈຳກັດ,ຮອງພະແນກການເງິນ-ບັນຊີຈົນເຖິງປະຈຸບັນ.

扫描全能王 创建

ເອກະສານຄັດຕິດ 04:

ບົດລາຍງານຄວາມຄືບໜ້າກ່ຽວກັບ

ການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ຊິມັ່ງລາວ ມະຫາຊົນ

1. ຈຸດປະສົງການຊື້ຮຸ້ນຂອງບໍລິສັດ ເຄືອຂ່າຍເຕັກນິກຊຽນຫານຢຸນນານ ຈຳກັດ

ຜູ້ລົງທຶນໃໝ່ມີເຈດຈຳນົງຢາກຊື້ຮຸ້ນທີ່ບໍລິສັດຢຸນນານສາກົນຖືຄອງ (ຈຳນວນ 35.6964%) ແລະ ຮຸ້ນທີ່ບໍລິສັດຫຼັກຊັບລາວ - ຈີນຖືຄອງ (ຈຳນວນ 18.8676%) ແລ້ວຈະກາຍເປັນຂາຮຸ້ນໃຫຍ່ທີ່ສຸດຂອງບໍລິສັດ, ສ່ວນຮຸ້ນຂອງລັດວິສາຫະກິດ ພ.ກ.ອ. ຈະຮັກສາຄືເກົ່າ, ແລະຈະຫັນປ່ຽນຂະແໜງການດຳເນີນທຸລະກິດ ແລະຈະເຮັດຂະແໜງການຜະລິດຊິມັ່ງເປັນຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ.

2. ໄລຍະເວລາຂ້າມຜ່ານຂອງການໂອນຮຸ້ນ

1) ບໍລິສັດຊຽນຫານຢຸນນານ ໄດ້ເຊັນສັນຍາຊື້ຂາຍຮຸ້ນກັບບໍລິສັດຢຸນນານສາກົນ ແລະ ບໍລິສັດຫຼັກຊັບລາວ - ຈີນສຳເລັດແລ້ວ.
2) ບໍລິສັດ ຊິມັ່ງລາວ ມະຫາຊົນໄດ້ເປີດເຜີຍຂໍ້ມູນການຊື້ຂາຍຮຸ້ນລະຫວ່າງບໍລິສັດຊຽນຫານຢຸນນານ ກັບ ບໍລິສັດຢຸນນານສາກົນ ແລະ ບໍລິສັດຫຼັກຊັບລາວ - ຈີນສຳເລັດແລ້ວ.
3) ບໍລິສັດຊຽນຫານຢຸນນານໄດ້ຮັບຈ້າງທີ່ປຶກສາການເງິນຍຶດສະໝັກາມລະບຽບການສຳເລັດແລ້ວ.
4) ບໍລິສັດຊຽນຫານຢຸນນານກຳລັງປະຕິບັດຂັ້ນຕອນຊອບຊື້ຮຸ້ນນຳຂາຮຸ້ນລາຍຍ່ອຍຕາມລະບຽບ.
5) ບໍລິສັດຊຽນຫານຢຸນນານໄດ້ເປີດເຜີຍຂໍ້ມູນກ່ຽວກັບແຜນການພັດທະນາຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ 5 ປີຂ້າງໜ້າ ແລະ ຂໍ້ມູນກ່ຽວກັບຈຳນວນຮຸ້ນທີ່ຜູ້ລົງທຶນໃໝ່ໄດ້ຊື້, ລາຄາຂອງຮຸ້ນ ແລະ ໄລຍະເວລາ.

3. ການປ່ຽນຂະແໜງການທຸລະກິດຫຼັກ ແລະ ການຕໍ່ສັນຍາສຳປະທານທີ່ດິນ

1) ການປ່ຽນຂະແໜງການທຸລະກິດຫຼັກ: ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 14 ສະບັບລົງວັນທີ 17/11/2016 ມາດຕາທີ 67 ຂໍ້ທີ 6 ໄດ້ກຳນົດວ່າ ຜູ້ລົງທຶນມີສິດສະເໜີປ່ຽນ ຫຼື ເພີ່ມຂະແໜງການທຸລະກິດ, ຫຼັງຈາກໄດ້ພິຈາລະນາ ແລະ ຮັບຮອງຜ່ານກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນແລ້ວ ບໍລິສັດ ຊິມັ່ງລາວ ມະຫາຊົນສາມາດສົ່ງໜັງສືສະເໜີໄປກະຊວງແຜນການ ແລະ ການລົງທຶນ, ສ່ວນວຽກງານດັ່ງກ່າວທາງບໍລິສັດກຳລັງປະຕິບັດຕາມຂັ້ນຕອນຢູ່.
2) ການຕໍ່ສັນຍາລົງທຶນ: ສັນຍາລົງທຶນຂອງບໍລິສັດ ຊິມັ່ງລາວ ມະຫາຊົນຈະໝົດອາຍຸໃນປີ 2028 ແຕ່ບໍລິສັດຈະຫັນປ່ຽນຂະແໜງການດຳເນີນທຸລະກິດແລະຈະເຮັດຂະແໜງການຜະລິດຊິມັ່ງເປັນຂະແໜງ

扫描全能王 创建

ການທ່ອງທ່ຽວ ແລະ ວັດທະນະທຳ, ສະນັ້ນ, ຜູ້ລົງທຶນສາມາດສະເໜີເຊັນສັນຍາໃໝ່ນຳລັດຖະບານ ແລະ ກຳນົດອາຍຸຂອງສັນຍາໃໝ່ຕາມກົດໝາຍທີ່ກ່ຽວຂ້ອງ, ສ່ວນວຽກງານດັ່ງກ່າວ ບໍລິສັດກຳລັງປະຕິບັດຕາມຂັ້ນຕອນຢູ່.

4. ສິດສຳປະທານການສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່

1) ການຮັກສາສິດສຳປະທານ: ບໍລິສັດ ຊິມັງລາວ ມະຫາຊົນມີຈຸດປະສົງຫັນປ່ຽນເປັນຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ ແລະຄຽງຄູ່ກັນນັ້ນ ຕ້ອງປະຕິບັດຕາມສັນຍາທີ່ເຊັນກັບລັດຖະບານ ສະບັບລົງວັນທີ 17/11/1998 ແລະ ສະບັບລົງວັນທີ 25/11/2013, ບໍລິສັດ ຊິມັງລາວ ມະຫາຊົນ ສາມາດຮັກສາສິດສຳປະທານສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່ຂອງໂຮງງານຊິມັງວັງວຽງຫຼັງ 2 ແຕ່ຕ້ອງປັບປຸງເນື້ອໃນຂອງສັນຍາຮັກສາແຕ່ເນື້ອໃນກ່ຽວກັບສິດສຳປະທານການຂຸດຄົ້ນວັດຖຸດິບ ດ້ານເນື້ອໃນອື່ນທີ່ບໍ່ກ່ຽວຂ້ອງ ຫຼື ເຊັນສັນຍາສິດສຳປະທານການບໍ່ແຮ່ໃໝ່ ຖືວ່າເປັນການຜິຈາລະນາຜິເສດໃຫ້ແກ່ຜູ້ລົງທຶນທີ່ເຄີຍໄດ້ຮັບສິດສຳປະທານດັ່ງກ່າວ.

ເນື່ອງຈາກວ່າສັນຍາບໍ່ຖ່ານຫີນຄອນພຸກແມ່ນສັນຍາທີ່ບໍລິສັດເຊັນກັບລັດຖະບານຕ່າງຫາກ ບໍລິສັດ ຊິມັງ ລາວ ມະຫາຊົນ ສາມາດຮັກສາສິດສຳປະທານຕາມສັນຍາການລົງທຶນທີ່ກ່າວເຖິງດັ່ງກ່າວ.

ແຕ່ປັດຈຸບັນນີ້, ມີປັດໄຈບໍ່ແນ່ນອນເກີດມາກະທົບເຖິງການຮັກສາບໍ່ຖ່ານຫີນ ທາງບໍລິສັດບໍ່ໄດ້ຮັກສາສິດສຳປະທານບໍ່ຖ່ານຫີນຄອນພຸກຕາມແຜນປັບປຸງທີ່ໄດ້ລະບຸໄວ້.

5. ການຈັດສັນພະນັກງານທ້ອງການ

ລັດຖະບານ ແລະ ບໍລິສັດຊຽນຫານຢຸນນານຈະປະຕິບັດຕາມຂໍ້ກຳນົດຂອງຄະນະ 1731 ວາງອອກ ຢ່າງເຂັ້ມງວດ.

6. ຄວາມຊ່ວຍເຫລືອ ຈາກລັດຖະບານ:

1. ສະເໜີໃຫ້ລັດຖະບານຊ່ວຍສະໜັບສະໜຸນການຮັກສາໃຫ້ ບຊລ ຢູ່ໃນສະຖານະ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ.
2. ສະເໜີໃຫ້ລັດຖະບານພິຈາລະນາອະນຸມັດຫັນປ່ຽນຈາກຂະແໜງຊິມັງ ມາເປັນຂະແໜງການທ່ອງທ່ຽວ ເປັນກິດຈະກຳຫຼັກຂອງບໍລິສັດ.
3. ສະເໜີຂໍຕໍ່ອາຍຸສຳປະທານ (ສັນຍາລົງທຶນ) ພິຈາລະນາການກຳນົດອາຍຸສັນຍາໃໝ່ໃຫ້ໂຄງການ ໃໝ່ 50 ປີຂຶ້ນໄປ.
4. ສະເໜີຂໍໃຫ້ລັດຖະບານມີນະໂຍບາຍຫຼຸດຜ່ອນພາສີ-ອາກອນໃຫ້ແກ່ໂຄງການໃໝ່.
5. ສະເໜີນຳເອົາໂຄງການຮ່ວມມືຂອງບໍລິສັດຈັດເຂົ້າແຜນຮ່ວມມືລາວ - ຈີນ, ລວມທັງການຮ່ວມມືຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນ ແຜນແມ່ບົດການຮ່ວມມືດ້ານເສດຖະກິດ - ເຕັກນິກ ລະຫວ່າງສອງລັດຖະບານ ແລະ ກົນໄກການຮ່ວມມື ລະຫວ່າງແຂວງພາກເໜືອ ກັບແຂວງຢຸນນານ ເພື່ອສ້າງເງື່ອນໄຂ

扫描全能王 创建

ໃຫ້ໂຄງການໄດ້ຮັບການສະໜັບສະໜຸນດ້ານນະໂຍບາຍ, ທຶນຮອນ ແລະ ການອຳນວຍຄວາມສະດວກ ຈາກອົງການທີ່ກ່ຽວຂ້ອງພາກລັດຂອງສອງປະເທດ.

ນະຄອນຫຼວງວຽງຈັນ, ວັນທີ 13 DEC 2022

ຜູ້ສະເໜີ :

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ເອກະສານຕິດຄັດ : 05

ໃບມອບສິດ

1.ຂ້າພະເຈົ້າ.....ສັນຊາດ.....

ບັດປະຈຳຕົວ/ບັດສະປໍເລກທີ..... ID card/passport NO:.....

ເຮືອນເລກທີ.....ບ້ານ.....ເມືອງ.....ແຂວງ.....

ເປັນຜູ້ຖືຮຸ້ນຂອງ ບໍລິສັດຊີມັ້ງລາວ ມະຫາຊົນ

ມີຮຸ້ນທີ່ຖືຈຳນວນ.....ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ

2.ຂໍມອບໝາຍ ທ່ານ/ທ່ານນາງ.....ບັດປະຈຳຕົວ/ບັດສະປໍເລກທີ.....

ເຮືອນເລກທີ.....ບ້ານ.....ເມືອງ.....ແຂວງ.....

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະ ເຈົ້າຢູ່ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຂອງ ບໍລິສັດຊີມັ້ງລາວມະຫາຊົນ,ທີ່ຈະຈັດຂຶ້ນໃນວັນທີ 16 ມັ້ງກອນ 2023 ຢູ່ຫ້ອງປະຊຸມໃຫ່ຍ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້(ເລືອກເອົາໜຶ່ງ ຈາກສອງທາງເລືອກລຸ່ມນີ້)

1. □ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວສົມຄວນ;ຫຼື
2. □ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນເຫັນດີ ຫຼື ບໍ່ເຫັນດີ ໃນທຸກໆວາລະລຸ່ມນີ້):

ວາລະທີ 1: ພິຈາລະນາ ແລະຮັບຮອງປ່ຽນແປງຂາຮຸ້ນຂອງບໍລິສັດ ຊີມັ້ງລາວ ມະຫາຊົນ

□ເຫັນດີ/approve □ບໍ່ເຫັນດີ/disapprove

ວາລະທີ 2: ພິຈາລະນາ ແລະຮັບຮອງປ່ຽນແປງຜູ້ຕາງໜ້າທີ່ຖືກົກໝາຍ (ຜູ້ອຳນວຍການໃຫ່ຍ)

□ເຫັນດີ/approve □ບໍ່ເຫັນດີ/disapprove

ວາລະທີ 3 : ພິຈາລະນາ ແລະຮັບຮອງສືບຕໍ່ຈັດຕັ້ງປະຕິບັດຕາມແຜນປັບປຸງ ແລະຟື້ນຟູທຸລະກິດຂອງ ບໍລິສັດ

□ເຫັນດີ/approve □ບໍ່ເຫັນດີ/disapprove

ເຊັນຜູ້ຕາງໜ້າ

扫描全能王 创建

ໝາຍເຫດ:ເອກະສານທັງໝົດນີ້ໃຫ້
ຖືເອົາສະບັບພາສາລາວເປັນຫຼັກ

ວິທະຍາ
ublic

扫描全能王 创建


Kamphengmeuang Rd
Kamphengmeuang Rd
Phonthan Neua Hom 4
Rue Phonthan
Lao Youth Union
.Cabinet office